**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສູນກາງພັກ
ກົມບໍລິຫານ

ເລກທີ 76 - /ກບຫ

ນະຄອນຫຼວງວຽງຈັນ, ວັນທີ 3 ເມສາ 2026

# ແຈ້ງເຊີນ

**ເຖິງ :** ບັນດາບໍລິສັດຮັບເໝົາສຳຫຼວດ-ອອກແບບ ກໍ່ສ້າງສ້ອມແປງອາຄານ ທີ່ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍແຫ່ງ ສປປ ລາວ.

**ເລື່ອງ:** ເຂົ້າຮ່ວມເຂົ້າຍື່ນຊອງປະມູນສຳລັບບັນດາໂຄງການສຳຫຼວດ-ອອກແບບຢູ່ພາຍໃນຫ້ອງວ່າການສູນກາງພັກ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມບໍລິຫານ, ສະບັບເລກທີ 394/ຫສພ, ລົງວັນທີ18 ກໍລະກົດ 2023.
- ອີງຕາມ ຂໍ້ຕົກລົງຂອງ ຫົວໜ້າຫ້ອງວ່າການສູນກາງພັກ ສະບັບເລກທີ 47/ຫສພ, ລົງວັນທີ 30 ມັງກອນ 2026, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງ ຫ້ອງວ່າການສູນກາງພັກ ປະຈຳປີ 2026.
- ອີງຕາມ ແຜນການຈັດຕັ້ງປະຕິບັດໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງ ຫ້ອງວ່າການສູນກາງພັກ ປະຈຳປີ 2026;

1. ກົມບໍລິຫານ ຫ້ອງວ່າການສູນກາງພັກ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີມາດຖານຄົບຖ້ວນເຂົ້າຍື່ນຊອງປະມູນສຳລັບບັນດາໂຄງການສຳຫຼວດ-ອອກແບບ ມີ 03 ໂຄງການ ມີລາຍລະອຽດ ຄື:
   - ໂຄງການສຳຫຼວດ-ອອກແບບ ພັດທະນາເຂດ III ແລະ IV ອານຸສອນສະຖານ ປະທານໄກສອນ ພົມວິຫານ.
   - ໂຄງການສຳຫຼວດ-ອອກແບບ ບ່ອນຈອດລົດຮັບໃຊ້ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ແລະ ຮັບແຂກການນຳຂັ້ນສູງ.
   - ໂຄງການ ສຳຫຼວດ-ອອກແບບ ອາຄານຫ້ອງການກອງຮ້ອຍທີ່ພັກພະນັກງານ ແລະ ສະໂມສອນຂອງກອງຮ້ອຍ1 ປ້ອງກັນຫຼັກ6.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

❖ **ຊຶ່ງຂັ້ນຕອນ ແລະ ລາຍລະອຽດຂອງການປະມູນ ມີດັ່ງລຸ່ມນີ້:**

1. ການປະມູນນີ້ອະນຸຍາດໃຫ້ທຸກໆບໍລິສັດທີ່ມີມາດຖານຄົບຖ້ວນ,ມີໃບອະນຸຍາດດຳເນີນທຸລະກິດປະຈຳປີ 2025 (ປະຕັງຊັ້ນໜຶ່ງ), ໃບທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍ, ໃບມອບພັນທະອາກອນປະຈຳປີ 2025.
2. ບໍລິສັດໃດທີ່ມີມາດຖານຄົບຖ້ວນສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ພະແນກເຄຫາ-ຊັບສິນ, ກົມບໍລິຫານ ຫ້ອງວ່າການສູນກາງພັກ.

3. ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວຕ້ອງຍື່ນໜັງສືສະເໜີຫາທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ **03 ເມສາ ຫາ ວັນທີ 13 ພຶດສະພາ 2026** ເປັນຕົ້ນໄປ, ໃນລາຄາ **2,500,000 ກີບ/ຊອງ**, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.

6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນເວລາວັນທີ..14..ພຶດສະພາ 2026 ແລະ ສະຖານ ທີ່ ທີ່ກຳນົດໃນການຍື່ນຊອງປະມູ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບພິຈາລະນາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ..9..:..00ໂມງ ວັນທີ ແລະ ສະຖານທີ່ ທີ່ກຳນົດໄວ້ການຍື່ນຊອງປະມູນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.

7. ການຄ້ຳປະກັນຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນດ້ວຍເຊັກ ຫລື ເງິນສົດໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ (ເງິນຄ້ຳ 2% ຈະຖືກສົ່ງຄືນໃຫ້ບໍລິສັດທີ່ບໍ່ຊະນະການປະມູນພາຍຫຼັງເປີດຊອງ 35 ວັນ).

❖ **ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວຕ້ອງໄດ້ປະຕິບັດຕາມຂັ້ນຕອນການປະມູນ ຄື:**

1. ປະກອບເອກະສານໃຫ້ຄົບຖ້ວນ.
2. ສຳລັບມື້ເປີດຊອງປະມູນຈະແຈ້ງຕາມພາຍຫຼັງ.
3. ຖ້າໄດ້ຮັບການຄັດເລືອກຈະໄດ້ເຊັນສັນຍາຮ່ວມງານກັນ.

ຖ້າບໍລິສັດໃດທີ່ມີຄວາມສົນໃຈເຂົ້າມາຍື່ນເອກະສານ ແລະ ເຈດຈຳນົງຊື້ຊອງປະມູນ ໃນໂມງລັດຖະການ ທີ່ຢູ່ ພະແນກເຄຫາ-ຊັບສິນ, ກົມບໍລິຫານ, ຫ້ອງວ່າການສູນກາງພັກ, ທີ່ຕັ້ງບ້ານ ສີວິໄລ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ (ຫຼັກ 6), **ໂທ 021 840195, 020 99802776.**

**ຫົວໜ້າກົມ**

(ເຈົ້າຂອງໂຄງການ)

ຫ້ອງວ່າການສູນກາງພັກ ກົມບໍລິຫານ

**ນ. ເກສອນ ວໍລະເພັດ**

**ບ່ອນສົ່ງ:**

- ສົ່ງຕາມເປົ້າໝາຍ 01 ສະບັບ.
- ກົມບໍລິຫານ 01 ສະບັບ.
- ພະແນກກ່ຽວຂ້ອງ 01 ສະບັບ.
- ສຳເນົາ 01 ສະບັບ.